แຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 22 ກໍຣະກະດາ 2007 ( 07-22-2007 )

---

## <u>ແບ່ງປັນເຣື່ອງພຣະຄຣິດທຸກໆບ່ອນ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ກິຈການ 13:1-3; 14:1-7, 21-23.

**<u>ຄໍາຖາມແຫ່ງຊີວິດ:</u>** ພຣະເຈົ້າຊົງມີພຣະປະສົງຢາກໃຫ້ພວກເຮົາເຮັດແນວໃດກັບເຣື່ອງຂ່າວປະເສີດ?

**<u>ຄວາມຈິງໃນພຣະຄັມພີ:</u>** ພຣະເຈົ້າໄດ້ຊົງຮຽກຮ້ອງໂບດທັງຫລາຍທີ່ຄົງຕົວແລ້ວໃຫ້ມີສ່ວນຮ່ວມໃນການຊ່ອຍເຫລືອອູ້ມຊູໂບດທີ່ຫາກໍເກີດໃໝ່ ແລະການຈະເຣີນເຕີບໂຕຂອງໂບດເຫລົ່ານັ້ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍໃຫ້ທ່ານເຮັດພາກສ່ວນຂອງທ່ານເພື່ອໃຫ້ໂບດເປັນໄປຕາມພຣະປະສົງຂອງພຣະເຈົ້າໂດຍ:

- ຄົ້ນຫາສະຖານທີ່ຫລາຍ ໆ ບ່ອນ, ທັງຢູ່ໃນເຂດໃກ້ ແລະໄກທົ່ວທຸກທີ່ນແຫ່ງໃນໂລກ, ທີ່ຕ້ອງການຂ່າວປະເສີດ ແລະຈະໄດ້ຕັ້ງຂຶ້ນຫລາຍ ໆ ໂບດໃຫ້ທົ່ວເຖິງ ແລະ
- ອະທິຖານດ້ວຍຄວາມເຊື່ອໝັ້ນ ແລະຊອກຫາສະຖານທີ່ ທີ່ທ່ານຈະສາມາດມີສ່ວນຮ່ວມໃນການປະກາດຮ່ວມກັນກັບໝ່ວຍປະກາດ ແລະວາງແຜນສ້າງໂບດຂຶ້ນໃຫ້ໄດ້ຫລາຍ ໆ ແຫ່ງ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນໍາ:</u>** - ການໃຊ້ປາກກາ ຫລືສໍທີ່ມີສີຕ່າງກັນຂຽນຫົວຂໍ້ທີ່ວ່າ: "**ວິທີການ,**" **ຍາກທີ່ສຸດ,**" **ແລະ** "**ປະຕິເສດ**" ໃສ່ກະດານ, ແລ້ວຖາມນັກຮຽນເພື່ອໃຫ້ເຂົາເຂົ້າໃຈຂອງການປຸກສ້າງໂບດ ແລະຈົດຈໍານໍາໄປໃຊ້ເພື່ອຂຍາຍໂບດອອກໄປໃຫ້ຫລາຍຂຶ້ນ. ( **ສົນທະນາຫາທາງແກ້ໄຂ 3 ຄວາມນັ້ນຂ້າງເທິງນີ້**)

ຄໍາຖາມ: ພຣະເຈົ້າຕ້ອງການໃຫ້ພວກເຮົາເຮັດຫຍັງກ່ຽວກັບຂ່າວປະເສີດນີ້?

## 1. <u>ຈົ່ງໄປ:</u> ( ກິຈການ 13:1-3 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ ກິຈການ 13:1-3

2) ຄວາມສຳຄັນຂອງຜູ້ປະກາດພຣະທັມຄືພ້ອມພາກັນສແວງຫາການຊົງນຳພາຈາກອົງພຣະຜູ້ເປັນເຈົ້າດ້ວຍການອະທິຖານ ແລະ ການອົດອາຫານ ແທນທີ່ຊິເອົາໃຈໃສ່ໃນການຊ່ອຍເຫລືອຕໍ່ຜູ້ທີ່ເປັນສະມາຊິກໃໝ່.

**ແນະນຳ:**

3) ບາງເທື່ອຄຳສັ່ງຂອງພຣະວິນຍານບໍຣິສຸດນັ້ນຜ່ານທາງຜູ້ປະກາດພຣະທັມ ແລະຄຣູສອນ.

4) ສ່ວນພື້ນຖານບ້ານຊ່ອງຂອງອັຄສາວົກເລີ່ມແຣກທີ່ຕັ້ງເປັນໂບດນັ້ນຢູ່ທີ່ເມືອງອັນຕີໂອເຊັຽ ໃນແຄວ້ນຊີເຣັຽ.

5) ພຣະວິນຍານບໍຣິສຸດໄດ້ນຳພາຜູ້ປະກາດພຣະທັມໃຫ້ເຮັດວຽກການຊ່ອຍເຫລືອໂດຍຣິດເດດພຣະວິນຍານ (13:2-4). ນີ້ເປັນຜົນຂອງຜູ້ທີ່ເຊື່ອແຕ່ລະຄົນທີ່ຍອມໃຫ້ພຣະເຢຊູຄຣິດເປັນເຈົ້ານຳພາຜ່ານທາງພຣະວິນຍານບໍຣິສຸດຂອງພຣະອົງ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ກິຈການ 13:1-3

1. ແມ່ນຫຍັງຄືຈຸດປະສົງຂອງການອົດອາຫານ ?
2. ຖ້າຫາກທ່ານເປັນຜູ້ຕິດຕາມພຣະເຈົ້າ ທ່ານຈະຮູ້ໄດ້ຢ່າງໃດວ່າແມ່ນພຣະວິນຍານເປັນຜູ້ນຳພາ?
3. ໃນ 3 ທາງທີ່ທ່ານຈັດຕຽມໄວ້ຊ່ອຍເຫລືອອູ້ມຊູຮ່ວມກັບຄົນອື່ນໃນໂບດຂອງທ່ານນັ້ນແມ່ນຫຍັງແດ່?

## 2. <u>ການປ່າວປະກາດ:</u> ກິຈການ 14:1-7

1) ຂໍໃຫ້ອາສາສມັກອ່ານພຣະທັມ ກິຈການ 14:1-7

**ແນະນຳ:**

2) ສະຖານນະການຂອງການປະກາດຂ່າວປະເສີດທົ່ວໂລກຂອງຄຣິສຕຽນ, ເບິ່ງຕົວຢ່າງຂອງທ່ານໂປໂລທີ່ເຮັດການອັສຈັນຄັ້ງທຳອິດ, ການເທສນາຄັ້ງທຳອິດຂອງລາວ ແລະຜົນງານການຊ່ອຍເຫລືອຂອງລາວ ກໍມີຄວາມສຳຄັນເໝືອນກັນກັບການມາເມືອງອີໂກນີອົນ.

3) ບ່ອນໃດທີ່ມີການປະກາດຂ່າວປະເສີດ ບ່ອນນັ້ນກໍມີການຍອມຮັບ ແລະກໍມີການປະຕິເສດເປັນຂອງທັມມດາ.

4) ປະຫວັດຊີວິດຂອງຜູ້ປະກາດພຣະທັມໄດ້ແຜ່ຂຍາຍໄປທົ່ວໂລກ, ພວກເຮົາທຸກຄົນກໍແມ່ນຜູ້ປະກາດພຣະທັມ, ພວກເຮົາຕ້ອງດຳເນີນການແບ່ງປັນເຣື່ອງພຣະຄິດຕໍ່ໄປ, ເຊື່ອຟັງທຳຕາມພຣະວິນຍານບໍຣິສຸດຊົງນຳໃຫ້ໄປຮອດໄປເຖິງຜູ້ທີ່ຍັງບໍ່ທັນເຊື່ອດ້ວຍບໍຣິສຸດໃຈ.

5) ເຊັ່ນທ່ານໂປໂລ ແລະທ່ານບາຣະນາບາ ໄດ້ນຳເອົາຂ່າວປະເສີດເຂົ້າໄປຫາຊາວຕ່າງຊາດໃນເມືອງ ອີໂກນີອົນ.

6) ປະສົບການຂອງທ່ານໂປໂລ ແລະທ່ານບາຣະນາບາທີ່ເຂົ້າໄປໃນເມືອງທີ່ບໍ່ເຄີຍໄປຈັກເທື່ອນັ້ນ, ຖ້າພວກເຮົາມາຊັ່ງຊາ ປຽບທຽບໃສ່ກັບຂໍ້ຄວາມທີ່ຂຽນໄວ້ໃນກະດານທີ່ວ່າ: " **ວິທີການ**" **ຍາກທີ່ສຸດ**" **ແລະ ປະຕິເສດ**" ສິ່ງເຫລົ່ານີ້ໄດ້ສ້າງຄວາມສັບສົນໃຫ້ເຂົາເຈົ້າໃນການແບ່ງປັນເຣື່ອງພຣະເຢຊູ ແລະກໍໄດ້ພົບຂໍ້ຫຍຸ້ງຍາກຫລາຍປະການດ້ວຍ. ເຂົາເຈົ້າໄດ້ພາກັນອອກໄປປະກາດໃຫ້ກັບຄົນໃນເມືອງອື່ນໄປເລື້ອຍ ໆ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ກິຈການ 14:1-7

1. ທ່ານເຄີຍໄດ້ໄປປະກາດ ແລະຊ່ອຍເຫລືອບ່ອນທີ່ຂາດເຂີນອາຫານ, ບ່ອນບໍ່ມີການສຶກສາ,ບ່ອນທີ່ຂາດເຂີນເງິນທອງໃຊ້ຈ່າຍ ຫລືໄຮ້ຄວາມຫວັງແລ້ວ ຫລືບໍ່?
2. ຕາມການວາດພາບເບິ່ງໂລກຂອງທ່ານນັ້ນ ມີສິ່ງໃດ, ແມ່ນຫຍັງທີ່ຍາກທີ່ສຸດໃນການແບ່ງປະຂ່າວປະເສີດ? ເປັນດ້ວຍເຫດໃດ?
3. ໃນການໄປປະກາດເຣື່ອງພຣະຄຣິດຂອງທ່ານແມ່ນຫຍັງທີ່ທ່ານພົບວ່າເປັນການຕໍ່ຕ້ານທີ່ຮ້າຍແຮງທີ່ສຸດ?

**3. <u>ເຂັ້ມແຂງຂຶ້ນ:</u>** ກິຈການ 14:21-23

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ກິຈການ 14:21-23

2) **ອະທິບາຍ:** ການເປັນຕົວແທນການເຮັດວຽກປະກາດຂ່າວປະເສີດ ແລະການສ້າງຕັ້ງໂບດເພື່ອໃຫ້ຜູ້ທີ່ເຊື່ອມີຄວາມເຂັ້ມແຂງນັ້ນ, ພວກເຮົາຄວນສນັບສນູນໃຫ້ກຳລັງໃຈຮ່ວມໄມ້ຮ່ວມມືກັບຄຣິສຕຽນທັງຫລາຍໃຫ້ຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອໂດຍ: ການຕັກເຕືອນເຂົາເຈົ້າໃຫ້ຮູ້ເຖິງບັນຫາທີ່ຈະມາພົບ ແລະຄຳສັນຍາໃນພຣະທັມພີໃຫ້ເຂົາເຈົ້າໄດ້ເຂົ້າໃຈ.

3) ທ່ານໂປໂລ ແລະທ່ານບາຣະນາບາໄປເປັນພຍານແຕ່ລະບ່ອນ ຣິດເດດຣັສມີຂອງພຣະເຈົ້າໄດ້ທຳງານເຮັດໃຫ້ມີຜູ້ມາຮັບເຊື່ອເພີ້ມຂຶ້ນ ແລະຕອບສນອງໃນການເທສນາສັ່ງສອນຂອງເຂົາເຈົ້າ. ຕາມການລາຍງານຂອງກອງປະຊຸມຫລວງສະທິຕິນານາຊາດໃນປີ 2006 ລາຍງານວ່າ ມີໂບດໃໝ່ເພີ້ມຂຶ້ນໃນປີນັ້ນເຖິງ23,486 ໂບດ. ມີໂບດໃໝ່ໃນຊາວເທີນບັບຕິສ 1,725 ໂບດທີ່ກຳລັງສ້າງຂຶ້ນໃນອາເມຣິກາເໜືອໃນປີດຽວກັນນັ້ນ.

4) **ຂໍ້ສເນີ:** ຂໍໃຫ້ພວກເຮົາທຸກຄົນອະທິຖານເພື່ອ ດ້ວຍຄວາມສັນໃຈເອົາໃຈໃສ່ໃນການມີສ່ວຍຮ່ວມສ້າງສາໃຫ້ຂຍາຍຂຶ້ນໄວ ໆ ແລະໃນການເສີມຂຍາຍການແບ່ງປັນເຣື່ອງພຣະເຢຊູຄຣິດເຊັ່ນດຽວກັນ.

5) **ຄຳຖາມ:** ເປັນຫຍັງຈຶ່ງໃຫ້ມີມິດຊັນນາຣີມາເວົ້າໃນໂບດຂອງທ່ານນັ້ນເປັນການສຳຄັນ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ກິຈການ 14:21-23

1. ເຮັດແນວໃດຈຶ່ງຈະໃຫ້ຕົວທ່ານເອງເຂັ້ມແຂງຂຶ້ນໃນພຣະຄຣິດ?
2. ແມ່ນຫຍັງທີ່ທ່ານໄດ້ຮຽນຈາກການຢືນຢັດຂອງທ່ານໂປໂລ ແລະທ່ານບາຣະນາບາ?
3. ມີຜູ້ທີ່ເຊື່ອໃໝ່ທີ່ທ່ານສາມາດຢູ່ຄຽງບ່າຄຽງໄລ່ເພື່ອທ່ານຈະໄດ້ຊ່ອຍເຂົາບໍ່?
4. ທ່ານຈະຊ່ອຍເຂົາໃຫ້ຈະເຣີນຂຶ້ນທາງດ້ານຄວາມເຊື່ອໄດ້ຢ່າງໃດ?
5. ທ່ານໄດ້ຖວາຍເພື່ອການຂຍາຍອານາຈັກອັນຖາວອນຂອງພຣະຄຣິດບໍ່?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ໄພ່ພົນຂອງພຣະເຈົ້າໃນໂບດຕ້ອງຕິດຕາມພຣະອົງ, ແຕ່ຢ່າອອກກ່ອນການນຳພາຂອງພຣະວິນຍານ
- ພຣະອົງສາມາດໃຊ້ໄພ່ພົນຂອງພຣະອົງໃຫ້ເລີ້ມສ້າງຕັ້ງໂບດໃໝ່ຫລາຍ ໆ ແຫ່ງຂຶ້ນ.
- ໄພ່ພົນຂອງພຣະເຈົ້າສາມາດຕັ້ງໃຈທີ່ຈະນຳເອົາຜູ້ທີ່ຄັດຄ້ານໃນເວລາເຂົາປະກາດຂ່າວປະເສີດໃຫ້ກັບໃຈໃໝ່, ໃຫ້ໄພ່ພົນຂອງພຣະອົງທຳໄປເລື້ອຍ ໆ ເພື່ອໃຫ້ຂ່າວປະເສີດແຜ່ຂຍາຍໄປທົ່ວທຸກແຫ່ງ.
- ໄພ່ພົນຂອງພຣະເຈົ້າຕ້ອງມີໜ້າທີ່ຮັບຜິດຊອບ ບໍ່ແມ່ນແຕ່ປະກາດໃຫ້ຜູ້ຫລົງຫາຍເທົ່ານັ້ນ, ແຕ່ຕ້ອງຕິດຕາມຜູ້ທີ່ເຊື່ອໃໝ່ຊ່ອຍເຂົາໃຫ້ເຂັ້ມແຂງຂຶ້ນທາງດ້ານຄວາມເຊື່ອຄືກັນ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )